ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------------------

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ເລກທີ: 736/ຄຂປກ

ວັນທີ: 21 FEB 2001

**ຄຳສັ່ງແນະນຳ**

**ເຖິງ:** ຫົວໜ້າ ພະແນກ ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ

**ເລື່ອງ:** ໃຫ້ຈັດຕັ້ງ ກວດກາ ຄຸ້ມຄອງ ລົດບັນທຸກໜັກ ( ຊັ່ງນ້ຳໜັກ ) ຕະຫຼອດ 24 ຊົ່ວໂມງ.

- ອີງຕາມແຈ້ງການ ຂອງທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການ ສຳນັກງານ ນາຍົກລັດຖະມົນຕີ ສະບັບເລກທີ 1037/ຫສນຍ, ລົງວັນທີ 14/06/2000 ກ່ຽວກັບການເຫັນດີໃຫ້ກະຊວງ ຄຂປກ ອອກແຈ້ງການ ກ່ຽວກັບ ການຄຸ້ມຄອງລົດບັນທຸກໜັກ.
- ອີງຕາມແຈ້ງການ ເລກທີ 2191/ຄຂປກ ລົງວັນທີ 04/7/2000 ວ່າດ້ວຍການ ຄຸ້ມຄອງລົດບັນທຸກນ້ຳໜັກເກີນຕາມເສັ້ນທາງຫຼວງໃນ ສປປ ລາວ.

ຜ່ານການເກັບກຳສະພາບການເຄື່ອນໄຫວຕົວຈິງຂອງລົດບັນທຸກສິນຄ້າ ໃນຂອບເຂດທົ່ວປະເທດ ຍັງສັງເກດເຫັນວ່າ ມີລົດຈຳນວນໜຶ່ງ ທີ່ບັນທຸກສິນຄ້າໜັກ ເກີນກຳນົດທີ່ທາງກະຊວງ ຄຂປກ ກຳນົດໄວ້ ເຄື່ອນໄຫວເວລາກາງຄືນ ແລະ ເວລາພະນັກງານຊັ່ງນ້ຳໜັກເລີກຈາກໂມງເຮັດວຽກ. ຈາກນັ້ນ ຍັງເຫັນວ່າ ຂອດກວດກາຂອງເຈົ້າໜ້າທີ່ ຢູ່ຕາມແຕ່ລະດ່ານໄດ້ກວດກາຕິດຊັ່ງ ນ້ຳໜັກລົດບັນທຸກ ຈຳນວນຫຼາຍຄັ້ງໃນເສັ້ນທາງຂົນສົ່ງເສັ້ນດຽວກັນ ເຮັດໃຫ້ການຂົນສົ່ງຊັກຊ້າເສຍເວລາ.

ເພື່ອເຮັດໃຫ້ວຽກງານຄຸ້ມຄອງລົດບັນທຸກໜັກເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍມີການກວດກາຢ່າງຕໍ່ເນື່ອງ ແລະ ວ່ອງໄວ ເຮັດໃຫ້ສະພາບເສັ້ນທາງ ມີອາຍຸການນຳໃຊ້ຍາວນານ ແລະ ຫຼຸດຜ່ອນທຶນຮອນເຂົ້າໃນການສ້ອມແປງ.

**ລັດຖະມົນຕີວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ**

**ອອກຄຳສັ່ງແນະນຳດັ່ງນີ້ :**

1. ໃຫ້ຈັດຕັ້ງກວດກາ ຊັ່ງນ້ຳໜັກ ລົດບັນທຸກ ຕະຫຼອດ 24 ຊົ່ວໂມງ.
2. ເພື່ອຮັບປະກັນບໍ່ໃຫ້ມີຫຼາຍຂອດກວດກາໂພດ ແລະ ເພື່ອຄວາມສະດວກ ວ່ອງໄວໃນການກວດກາຂອງດ່ານຕໍ່ໄປ ໃຫ້ກວດກາຊັ່ງນ້ຳໜັກ ຢູ່ຈຸດຕົ້ນທາງ ແລະ ປາຍທາງ ໂດຍບັນທຶກຈານວນສິນຄ້າ ແລະ ລົງລາຍເຊັນຢັ້ງຢືນຂອງພະນັກງານ ປະຈຳດ່ານ ລົງໃນໃບບັນທຶກນ້ຳໜັກ, ສ່ວນດ່ານຢູ່ລະຫວ່າງກາງ ໃຫ້ກວດກາເບິ່ງໃບບັນທຶກດັ່ງກ່າວ ບໍ່ຈຳເປັນຕ້ອງຕິດຊັ່ງອີກ.
   - ຖ້າມີກໍລະນີຜິດສັງເກດ ຫຼື ສົງໄສວ່າລົດບັນທຸກຄັນດັ່ງກ່າວ ມີນ້ຳໜັກບັນທຸກລື່ນຈາກຂໍ້ກຳນົດ ກົດລະບຽບຂອງກະຊວງ ຄຂປກ ວາງອອກ ໃຫ້ດ່ານກາງທາງກວດກາຄືນໃໝ່ ແລະ ປັບໃໝ ຕາມລະບຽບຫຼັກການ.
   - ຖ້າລົດບັນທຸກຄັນດັ່ງກ່າວຫາກຖືກກວດກາເຫັນວ່າໃບບັນທຶກນ້ຳໜັກຖືກຕ້ອງຕາມຕົ້ນທາງ ແລະ ນ້ຳໜັກບັນທຸກບໍ່ລື່ນຈາກຂໍ້ກຳນົດກົດລະບຽບຂອງກະຊວງ ຄຂປກ ວາງອອກໃຫ້ປ່ອຍໄປ ແລະ ບໍ່ເກັບເງິນຄ່າຊັ່ງອີກ.
3. ການເກັບເງິນຄ່າຊັ່ງນ້ຳໜັກ ແມ່ນເກັບໃນເວລາມີການຕິດຊັ່ງຢູ່ຈຸດຕົ້ນທາງ ແລະ ປາຍທາງເທົ່ານັ້ນ ສ່ວນການຕິດຊັ່ງ ແລະ ກວດກາໃບບັນທຶກນ້ຳໜັກ ລະຫວ່າງທາງ ທີ່ເຫັນວ່າຖືກຕ້ອງຈະບໍ່ ໄດ້ເກັບເງິນອີກ.

ດັ່ງນັ້ນ ຈຶ່ງອອກຄຳສັ່ງແນະນຳສະບັບນີ້ໃຫ້ກົມຂົນສົ່ງ ເປັນຜູ້ຕິດຕາມ ກວດກາ ແລະ ໃຫ້ບັນດາ ພະແນກ ຄຂປກ ປະຈຳແຂວງ ກຳແພງນະຄອນ ແລະ ເຂດພິເສດ ເປັນຜູ້ຈັດຕັ້ງປະຕິບັດຕາມຄຳສັ່ງແນະນຳ ສະບັບນີ້ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ

ເພົ້າ ບຸນນະຜົນ